**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງອັດຕະປື

ເລກທີ 03 /ຈຂ.ອປ

ອັດຕະປື,ວັນທີ 31 ມັງກອນ 2019

# ຄຳສັ່ງແນະນຳ

**ເຖິງ :** -ບັນດາພະແນກການ,ກົມກອງ ແລະ ອົງການທຽບເທົ່າຂັ້ນຕ່າງໆອ້ອມຂ້າງແຂວງ ແລະ ເມືອງ.

-ບັນດາຫົວໜ່ວຍທຸລະກິດ ບຸກຄົນ, ນິຕິບຸກຄົນ ຫລື ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວດຳເນີນທຸລະກິດ ຢູ່ ແຂວງອັດຕະປື.

**ເລື່ອງ:** ການມອບລາຍຮັບງົບປະມານແຫ່ງລັດເຂົ້າບັນຊີເງິນຝາກຂອງແຂວງ (ບັນຊີ110) ຜ່ານລະບົບທະນາຄານ ໃນຂອບເຂດທົ່ວແຂວງ.

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສ ປ ປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ໝວດທີ IV, ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ;
- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ສະບັບປັບປຸງ) ສະບັບເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015 ແລະກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 52/ສພຊ,ລົງວັນທີ 23 ກໍລະກົດ 2014;
- ອີງຕາມ ກົດໝາຍວ່າດ້ວຍທຸລະກິດທາງດ້ານເອເລັກໂຕຣນິກ ສະບັບເລກທີ 20/ສພຊ, ລົງວັນທີ 07 ທັນວາ 2012;
- ອີງຕາມ ຄຳສັ່ງແນະນຳ ຂອງທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ສະບັບເລກທີ 3102/ກງ, ລົງວັນທີ 13 ກັນຍາ 2017 ກ່ຽວກັບການມອບລາຍຮັບງົບປະມານແຫ່ງລັດເຂົ້າບັນຊີເງິນຝາກ ຂອງລັດຖະບານ ຜ່ານລະບົບທະນາຄານ ໃນຂອບເຂດທົ່ວປະເທດ.

ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຄຳສັ່ງແນະນຳ ຂອງທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ສະບັບເລກທີ 3102/ກງ, ລົງວັນທີ 13 ກັນຍາ 2017 ໄດ້ຖືກປະຕິບັດ ໃນຂອບເຂດທົ່ວແຂວງ ໃຫ້ປະກົດຜົນເປັນຈິງ ແລະ ຮັບປະກັນການເກັບລາຍຮັບງົບປະມານແຫ່ງລັດ ເຂົ້າບັນຊີເງິນຝາກ ຂອງແຂວງຜ່ານລະບົບທະນາຄານ ໃຫ້ຖືກຕ້ອງ, ຄົບຖ້ວນ, ທັນຕາມກຳນົດເວລາ ແລະ ເອກະພາບ ໃນຂອບເຂດທົ່ວແຂວງອັດຕະປື, ເພື່ອແນ່ໃສ່ປະຢັດເວລາ, ຫລຸດຜ່ອນການຮັບເງິນສົດ ຂອງຄັງເງິນແຫ່ງຊາດ, ຫລຸດຜ່ອນຄ່າສິ້ນເປືອງຕ່າງໆ ແລະ ຫັນວຽກງານການເກັບລາຍຮັບງົບປະມານແຫ່ງລັດໄປສູ່ລະບົບທັນສະໄໝເທື່ອລະກ້າວ.

## ເຈົ້າແຂວງອັດຕະປື ອອກຄຳສັ່ງແນະນຳ :

1. ເລີ່ມແຕ່ວັນທີ 01 ກຸມພາ 2019 ເປັນຕົ້ນໄປ, ມອບໃຫ້ບັນດາພະແນກການ, ກົມກອງ ແລະການ

ຈັດຕັ້ງຂັ້ນຕ່າງໆ ອ້ອມຂ້າງແຂວງ, ເມືອງ ແລະ ບັນດາຫົວໜ່ວຍທຸລະກິດ, ບຸກຄົນ, ນິຕິບຸກຄົນ ຫລື ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ທີ່ມາເຄື່ອນໄຫວດຳເນີນທຸລະກິດ ຢູ່ ແຂວງ ອັດຕະປື, ມາແຈ້ງມອບພັນທະອາກອນດ້ວຍຕົນເອງ ຜ່ານລະບົບທະນາຄານ ດ້ວຍຫລາຍຊ່ອງ ທາງໄດ້ເປີດນຳໃຊ້ແລ້ວ, ລະບົບຄຸ້ມຄອງອາກອນ ແລະ ຊຳລະອາກອນຜ່ານລະບົບທະນາຄານ ແບບທັນສະໄໝ (Easy Tax), ພຽງແຕ່ທ່ານສະໝັກເປັນສະມາຊິກ ຊຳລະອາກອນ ແບບນຳໃຊ້ ລະບົບເອເລັກໂຕຣນິກ ຂອງທະນາຄານ ເຊັ່ນ: ATM, internet, BanKing, Moblie BanKing, EDC/POS ແລະ ຊ່ອງທາງອື່ນ, ການຊຳລະຜ່ານລະບົບ: Smart Tax, Easy Tax, Smart Vat ໄດ້ມີນິຕິກຳ ແລະ ລະບຽບການຄຸ້ມຄອງສະເພາະ;

2. ມອບໃຫ້ສ່ວຍສາອາກອນປະຈຳແຂວງ :
   - 2.1 ຮຽກເຊີນເອົາບັນດາພະແນກການ, ກົມກອງ, ການຈັດຕັ້ງ ແລະ ບັນດາຫົວໜ່ວຍທຸລະກິດ ເປົ້າໝາຍ ຕາມທີ່ໄດ້ກຳນົດໄວ້ ຢູ່ໃນຂໍ້ 1 ຂອງ ຄຳສັ່ງແນະນຳສະບັບນີ້ ເພື່ອຊຸກຍູ້, ແນະນຳນະໂຍບາຍດ້ານຕ່າງໆ ກ່ຽວກັບການມອບລາຍຮັບງົບປະມານແຫ່ງລັດ ເຂົ້າບັນຊີເງິນຝາກຂອງແຂວງ ຜ່ານລະບົບທະນາຄານ ໃຫ້ລະອຽດ,ຈະແຈ້ງ;
   - 2.2 ຄຸ້ມຄອງ, ຕິດຕາມ,ກວດກາ, ໄລ່ລຽງ ອອກໃບສັ່ງມອບພັນທະໃຫ້ຄົບ, ຊັດເຈນ, ທັນກຳນົດເວລາ ແລະ ຖືກຕ້ອງ ຕາມເນື້ອໃນສາລະບານງົບປະມານ, ບັນຊີ ໂດຍແຍກລະອຽດ ລາຍຮັບພູດສູນກາງ ແລະ ທ້ອງຖິ່ນ;
   - 2.3 ກວດກາຄືນ ຄວາມຖືກຕ້ອງ ການສັ່ງມອບພັນທະເຂົ້າງົບປະມານແຫ່ງລັດ ລະອຽດຕາມປະເພດລາຍຮັບ ກ່ອນການບັນທຶກບັນຊີ, ເປັນເຈົ້າການສົມທຽບຕົວເລກລາຍຮັບ ກັບຄັງເງິນແຫ່ງຊາດປະຈຳແຂວງ ເປັນແຕ່ລະວັນ, ອາທິດ, ເດືອນ, ງວດ ແລະ ປີ;
   - 2.4 ອຳນວຍຄວາມສະດວກ, ຕິດຕາມ, ກວດກາ ຫົວໜ່ວຍທຸລະກິດ, ບຸກຄົນ, ນິຕິບຸກຄົນ ຫລື ອົງການຈັດຕັ້ງ ທີ່ແຈ້ງມອບພັນທະຜ່ານລະບົບເອເລັກໂຕຣນິກ ຕາມແບບຟອມກຳນົດ;
   - 2.5 ຄຸ້ມຄອງລະບົບ,ຕິດຕາມ, ກວດກາ ການມອບລາຍຮັບເຂົ້າບັນຊີເງິນຝາກຂອງແຂວງ ຢ່າງເປັນປົກກະຕິ;
   - 2.6 ສົ່ງຂໍ້ມູນການມອບລາຍຮັບໃນລະບົບເອເລັກໂຕຣນິກ ໃຫ້ຄັງເງິນແຫ່ງຊາດປະຈຳແຂວງ ເພື່ອສົມທຽບຕົວເລກລາຍຮັບ ກັບບັນຊີສຳຮອງຂອງທະນາຄານ;

3. ມອບໃຫ້ທະນາຄານ :
   - 3.1 ທະນາຄານ ທີ່ໃຫ້ບໍລິການ ໃນຂອບເຂດທົ່ວແຂວງ ຕ້ອງໄດ້ໃຫ້ຄວາມຮ່ວມມື, ອຳນວຍຄວາມສະດວກ ໃນການມອບລາຍຮັບດ້ວຍເງິນສົດ, ແຊັກ, ເງິນໂອນ ຜ່ານຮູບແບບປົກກະຕິ ແລະ ແບບເອເລັກໂຕຣນິກ;
   - 3.2 ຄຸ້ມຄອງ ແລະ ຮັບປະກັນຖານຂໍ້ມູນ ການມອບລາຍຮັບງົບປະມານ ຜ່ານລະບົບທະນາຄານ ໃຫ້ມີຄວາມປອດໄພ ຖືກຕ້ອງຊັດເຈນ ແລະ ສາມາດກວດສອບໄດ້;
   - 3.3 ສະໜອງ ແລະ ສົ່ງຂໍ້ມູນ ການມອບລາຍຮັບເຂົ້າງົບປະມານ ໃຫ້ຄັງເງິນແຫ່ງຊາດປະຈຳແຂວງ ດ້ວຍຮູບການສຳເນົາ ຫລື ອັດຂໍ້ມູນເອກະສານ (scane) ກ່ອນເວລາ 09:00ໂມງ ຂອງມື້ຕໍ່ມາໃນເວລາລັດຖະການ ເຊິ່ງປະກອບດ້ວຍເອກະສານຄື:ໃບແຈ້ງມີ,ໃບແຈ້ງມອບ

ພັນທະ ຫລື ໃບແຈ້ງມອບອື່ນໆ ແລະ ໃບລາຍງານບັນຊີສຳຮອງ.

4. ມອບໃຫ້ຄັງເງິນແຫ່ງຊາດປະຈຳແຂວງ :

4.1 ເປັນເຈົ້າການພົວພັນຂໍ້ມູນ, ເອກະສານການມອບພັນທະ ພ້ອມບັນຊີສຳຮອງຈາກທະນາຄານເປັນປະຈຳວັນ, ເພື່ອບັນທຶກບັນຊີລາຍຮັບງົບປະມານແຫ່ງລັດ ຕາມແຕ່ລະເນື້ອໃນລາຍການມອບພັນທະ;

4.2 ຄັງເງິນແຫ່ງຊາດແຕ່ລະຂັ້ນ ມີໜ້າທີ່ກວດກາ ແລະ ສົມທຽບຕົວເລກລາຍຮັບ ຈາກການແຈ້ງເສຍພາສີ-ອາກອນແລະ ພັນທະອື່ນໆ ເຊິ່ງມອບຜ່ານລະບົບທະນາຄານແບບປົກກະຕິແບບເອເລັກໂຕນິກໃຫ້ຖືກຕ້ອງ, ຄົບຖ້ວນທັນຕາມກຳນົດເວລາ;

4.3 ນຳໃຊ້ internet Banking ຫລື online statement ຂອງທະນາຄານ ເພື່ອຕິດຕາມ, ກວດກາ ສົມທຽບບັນຊີລາຍຮັບງົບປະມານແຫ່ງລັດ ກັບພາກສ່ວນທີ່ກ່ຽວຂ້ອງ;

4.4 ສະຫລຸບສັງລວມຕົວເລກລາຍຮັບງົບປະມານ ທີ່ເກີດຂຶ້ນໃນລະບົບບັນຊີຄັງເງິນແຫ່ງຊາດເປັນແຕ່ລະວັນ, ເດືອນ, ງວດ ແລະ ປີ.

5. ກໍລະນີຜູ້ປະຕິບັດພັນທະ ມີການແຈ້ງ, ການມອບພັນທະອາກອນຊັກຊ້າ ທາງລະບົບຈະໄດ້ປັບໃໝອັດຕະໂນມັດ ຫລື ປັບໃໝຕາມລະບຽບກົດໝາຍທີ່ໄດ້ກຳນົດໄວ້;

6. ມອບໃຫ້ພະແນກການເງິນແຂວງ ປະສານສົມທົບກັບພາກສ່ວນທະນາຄານ, ທີ່ຄັງເງິນແຫ່ງຊາດປະຈຳແຂວງ ໃຊ້ບໍລິການ ໃນຂອບເຂດທົ່ວແຂວງ, ສ້າງກົນໄກປະສານສົມທົບ, ຈຸດປະສານງານກໍລະນີມີຂໍ້ຄົງຄ້າງເກີດຂຶ້ນ ເວລາຈັດຕັ້ງປະຕິບັດ ຄຳສັ່ງສະບັບນີ້ ຕ້ອງພ້ອມກັນຄົ້ນຄວ້າ, ປັບປຸງແກ້ໄຂ ຫລື ນຳສະເໜີ ຂໍທິດຊີ້ນຳຈາກຂັ້ນເທິງ ຢ່າງທັນການ.

**ດັ່ງນັ້ນ**, ຈຶ່ງອອກຄຳສັ່ງແນະນຳສະບັບນີ້ ມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ເຈົ້າແຂວງ**

ແຂວງອັດຕະປື
ເຈົ້າແຂວງແຂວງອັດຕະປື

ເລັດ ໄຊຍະພອນ